## ກວດແກ້ວໃສ່ ຂໍ້ຄວາມແຫ່ງຄວາມຝັນ ຊ່ວຍສົ່ງເສີມການແລກປ່ຽນດ້ານວັດທະນະທຳ



ກິດຈະກຳ "ກວດແກ້ວໃສ່ ຂໍ້ຄວາມແຫ່ງຄວາມຝັນ" ແມ່ນເລີ່ມຕົ້ນມາຈາກຮູບເງົາເລື່ອງ "ນິທານກະແສຄື້ນດຳ (Kuroshio) ຂອງຂວັນມາຈາກທະເລ" ເຊິ່ງໄດ້ດຳເນີນຢູ່ປະເທດຍີ່ປຸ່ນ 14 ປີມາແລ້ວ ໂດຍມີຈຸດປະສົງເພື່ອສົ່ງເສີມຄວາມຫວັງ ແລະ ຄວາມຝັນຂອງເດັກນ້ອຍ ສົ່ງເສີມການພົບປະແລກປ່ຽນວັດທະນະທຳ ພາສາ ການດຳລົງຊີວິດ ແຫຼ່ງທ່ອງທ່ຽວ ແລະ ປະສົບການຕ່າງໆເຊິ່ງກັນ ແລະ ກັນ ປີ 2008 ທ່ານ ເທັດຊຸໂອະ ໂຢຊິດະ ຫົວໜ້າສູນເຝິກອົບຮົມເທັດຈັງເນັດ (ມ.ສ ວຽງ ຈັນ) ໄດ້ລະດົມຈົດໝາຍຂອງເດັກນ້ອຍລາວ ຈຳນວນ 46 ສະບັບ ເຂົ້າຮ່ວມກິດຈະກຳດັ່ງກ່າວ ເປັນຄັ້ງທຳອິດ ໂດຍ ໄດ້ນຳໃສ່ໃນແກ້ວ 10 ໜ່ວຍ ໄປປ່ອຍລົງທະເລຢູ່ເມືອງ Shibushi ປະເທດຍີ່ປຸ່ນ ຈົດໝາຍເຫຼົ່ານັ້ນໄດ້ຂຽນກ່ຽວກັບ ຄວາມ ຝັນ ຄວາມ ປາຖະໜາຂອງຕົນໃສ່ໃນແກ້ວດັ່ງກ່າວ ແລະກວດແກ້ວເຫຼົ່ານັ້ນໄດ້ໄຫຼກະຈາຍກັນໄປ ເຊິ່ງໃນນັ້ນມີແກ້ວໜຶ່ງ ໜ່ວຍ ທີ່ ເດັກນ້ອຍຍີ່ປຸ່ນ ຢູ່ເມືອງ Toyohashi ປະເທດຍີ່ປຸ່ນ ເກັບໄດ້ແລ້ວມາອ່ານ ໂດຍຜ່ານການແປຈາກພາສາລາວ ເປັນ ພາສາຍີ່ປຸ່ນ ຈຶ່ງຮູ້ວ່າ ຈົດໝາຍເຫຼົ່ານີ້ມາຈາກປະເທດລາວ ຈາກນັ້ນເຂົາເຈົ້າກໍໄດ້ຂຽນຈົດໝາຍຄວາມຝັນ ແລະ ຄວາມ ປາຖະໜາຕອບກັບຄືນ ພ້ອມທັງໄດ້ມີການຕິດຕໍ່ພົວພັນກັນເປັນຢ່າງດີ.

ສຳລັບປີ 2009 ແມ່ນປີແຫ່ງການແລກປ່ຽນລະຫວ່າງປະເທດຍີ່ປຸ່ນ ແລະ ບັນດາປະເທດລຸ່ມແມ່ນ້ຳຂອງ ສະນັ້ນ ເພື່ອເປັນ ການສົ່ງຄວາມປາຖະໜາດີໄປຍັງບັນດາປະເທດ ໂດຍຖືເອົາ ສປປ ລາວ ເປັນຈຸດສຳຄັນໃນການແລກປ່ຽນມິດຕະພາບ ໂດຍຜ່ານແມ່ນ້ຳຂອງ ກິດຈະກຳ "ກວດແກ້ວໃສ່ ຂໍ້ຄວາມແຫ່ງຄວາມຝັນ" ຈຶ່ງຈະໄດ້ມາຈັດຂຶ້ນເປັນຄັ້ງທຳອິດຢູ່ ສປປ ລາວ ປັດຈຸບັນແມ່ນກຳລັງຢູ່ຂັ້ນຕອນປະສານງານ ແລະ ລໍຖ້າການອະນຸຍາດຈາກກະຊວງສຶກສາທິການ ເມື່ອໄດ້ຮັບອະນຸ ຍາດກໍຈະຈັດຂຶ້ນທັນທີ ໂດຍການປ່ອຍກວດແກ້ວ ຈະຈັດຢູ່ນະຄອນຫຼວງວຽງຈັນ ຫຼວງພະບາງ ແລະ ແຂວງຈຳປາສັກ ເຊິ່ງ ຈະໄດ້ສະເໜີໄປຕາມໂຮງຮຽນຕ່າງໆທົ່ວປະເທດ ເພື່ອຂຽນຈົດໝາຍຄວາມຝັນ-ຄວາມປາຖະໜາຂອງຕົນເຂົ້າຮ່ວມ.

* ຄັດຈາກ: ໜັງສືພິມວຽງຈັນໃໝ່, ສະບັບວັນທີ 18-09-2009